ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------===000===--------

ທະນາຄານແຫ່ງ ສປປ ລາວ

ກອງທຶນປົກປ້ອງຜູ້ຝາກເງິນ

ເລກທີ 70 /ກທປ

ນະຄອນຫຼວງວຽງຈັນ, ວັນທີ 29 ກັນຍາ 2017

# ແຈ້ງການ

ເຖິງ : ທ່ານຜູ້ອຳນວຍການ ທະນາຄານທຸລະກິດລັດ, ທະນາຄານລັດຮ່ວມທຶນ, ທະນາຄານເອກະຊົນ, ທະນາຄານລູກຂອງຕ່າງປະເທດ ແລະ ທະນາຄານສາຂາຕ່າງປະເທດ ທີ່ເປັນສະມາຊິກຂອງ ກອງທຶນປົກປ້ອງຜູ້ຝາກເງິນ.

ເລື່ອງ: ການສົ່ງປື້ມລາຍງານຖານະການເງິນປະຈຳເດືອນ ໃຫ້ແກ່ກອງທຶນປົກປ້ອງຜູ້ຝາກເງິນ.

- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມກົດລະບຽບ ວ່າດ້ວຍກອງທຶນປົກປ້ອງຜູ້ຝາກເງິນ ເລກທີ 283/ທຫລ, ລົງວັນທີ 30 ສິງຫາ 1999;
- ອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ສະເພາະໜ້າ ແລະ ຍາວນານຂອງ ກອງທຶນປົກປ້ອງຜູ້ຝາກເງິນ.

ເພື່ອເຮັດໃຫ້ການສະໜອງຂໍ້ມູນລາຍງານຂອງບັນດາສະມາຊິກ ໃຫ້ແກ່ກອງທຶນປົກປ້ອງຜູ້ຝາກເງິນ ມີຄວາມເປັນເອກະພາບ ແລະ ມີຄວາມສະດວກໃນການປະຕິບັດວຽກງານ ຕາມພາລະບົດບາດຂອງ ກອງທຶນປົກປ້ອງຜູ້ຝາກເງິນ.

ກອງທຶນປົກປ້ອງຜູ້ຝາກເງິນ ທະນາຄານແຫ່ງ ສປປ ລາວ ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດການສົ່ງປື້ມລາຍງານຖານະການເງິນປະຈຳເດືອນ ໃຫ້ແກ່ກອງທຶນປົກປ້ອງຜູ້ຝາກເງິນ ຮຽງຕາມລຳດັບ ແລະ ລາຍການດັ່ງນີ້:

1. ເພດານເງິນຝາກ: ຈຳນວນບັນຊີ, ຈຳນວນຜູ້ຝາກເງິນ ແລະ ຈຳນວນເງິນ ແຍກຕາມສະກຸນເງິນກີບ, ບາດ ແລະ ໂດລາ (ຊື່ຟອມ: dpf.01 all in one);
2. ໃບດຸ່ນດ່ຽງບັນຊີ (ຊື່ຟອມ: Trial BL (Equivalent all LAK, LAK, USD, THB))

3. ໃບສະຫຼຸບຊັບສົມບັດ: ຊັບສິນ ແລະ ໜີ້ສິນ (ຊື່ຟອມ: bol.02A ແລະ bol.02L)
4. ໃບລາຍງານ ລາຍຮັບ-ລາຍຈ່າຍ (ຊື່ຟອມ: bol.03 Inc-Exp)
5. ໃບລາຍງານຄວາມພຽງພໍຂອງທຶນ (ຊື່ຟອມ: bol.04 Capital)
6. ໃບລາຍງານຊັບສິນສ່ຽງໃນໃບສະຫຼຸບຊັບສົມບັດ (ຊື່ຟອມ: bol.04.1 A Risk Weight on BS)
7. ໃບລາຍງານຊັບສິນສ່ຽງນອກໃບສະຫຼຸບຊັບສົມບັດ (ຊື່ຟອມ: bol.04.2 Risk Weight off BS)
8. ລາຍງານເງິນຝາກທັງໝົດ ແຍກຕາມປະເພດເງິນຝາກ (ຊື່ຟອມ: bol.08.4 Type of deposit)
9. ອັດຕາດອກເບ້ຍເງິນຝາກ ແລະ ອັດຕາດອກເບ້ຍເງິນກູ້ (Interest Rate of Loan and deposit)
10. ອັດຕາແລກປ່ຽນເງິນຕາຕ່າງປະເທດ ປະຈຳເດືອນ (Monthly Foreign Exchange Rate).

ຂໍ້ມູນທີ່ບໍ່ຈຳເປັນສົ່ງ (ໄລຍະຜ່ານມາເຄີຍສົ່ງ)

1. ປຶ້ມລາຍງານຖານະການເງິນ ປະຈຳໄຕມາດ
2. ປຶ້ມລາຍງານຖານະການເງິນ ປະຈຳປີ (ກ່ອນ ແລະ ຫຼັງ ປິດບັນຊີ)
3. ລາຍງານແຫຼ່ງທຶນ ແລະ ການນຳໃຊ້ທຶນ (ຊື່ຟອມ: bol.05 Fund and Utilization)
4. ລາຍງານສິນເຊື່ອທັງໝົດ (ຊື່ຟອມ: bol.06 ແລະ bol.07)
5. ລາຍງານເງິນຝາກຂອງລູກຄ້າໃຫຍ່ສຸດ 30 ລາຍ (ຊື່ຟອມ: bol.08.1 Top30 of depositor)
6. ລາຍງານເງິນຝາກຂອງທະນາຄານ ຫຼື ສະຖາບັນການເງິນ (ຊື່ຟອມ: bol.08.2 Top30 of Bank&FI)
7. ລາຍງານເງິນຝາກຂອງທະນາຄານທີ່ຝາກຢູ່ທະນາຄານອື່ນ (ຊື່ຟອມ: bol.08.5 deposit in other banks).

ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 22/ກທປ, ລົງວັນທີ 01 ກຸມພາ 2013.

ດັ່ງນັ້ນ, ຈຶ່ງແຈ້ງການ ມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ ເລີ່ມແຕ່ **ເດືອນຕຸລາ (10) ປີ 2017** ເປັນຕົ້ນໄປ.

ຜູ້ອຳນວຍການ ກອງທຶນປົກປ້ອງຜູ້ຝາກເງິນ

ທະນາຄານ ແຫ່ງ ສປປ ລາວ
ກອງທຶນປົກປ້ອງ
ຜູ້ຝາກເງິນ
DEPOSITERS PROTECTION FUND
ນະຄອນຫລວງວຽງຈັນ

ແສງດາວວີ ວົງຄຳຊາວ